ກະຊວງຍຸຕິທັມແຫ່ງສະຫະຣັດ
ພະແນກສິດທິພົລເຮືອນ

# ການປ້ອງກັນຈາກຣັຖບານກາງ ຕໍ່ການແບ່ງແຍກຊັ້ນວັນນະ ຍ້ອນຊາດກຳເນີດ



*ອອກເຜີຍແຜ່ໃນ ເດືອນເມສາ 2001*

# ຄຳນຳ

ກົດໝາຍແຫ່ງຣັຖບານກາງຫ້າມການແບ່ງແຍກຊັ້ນວັນນະ ຕໍ່ຄົນໃດຄົນໜຶ່ງ ໂດຍອີງຕາມຊາດກຳເນີດ, ເຊື້ອຊາດ, ຜິວພັນ, ສາສນາ, ອາການພິການ, ເພດ, ແລະຖານະຄອບຄົວ. ກົດໝາຍທີ່ຫ້າມການແບ່ງຊັ້ນວັນນະກ່ຽວກັບຊາດກຳເນີດ ໄດ້ເຮັດໃຫ້ການແບ່ງແຍກຊັ້ນວັນນະ ຍ້ອນບ່ອນກຳເນີດ, ເຊື້ອສາຍ, ວັທນະທັມຫຼືພາສາຂອງບຸກຄົນ ເປັນການຜິດກົດໝາຍ. ຂໍ້ນີ້ໝາຍຄວາມວ່າຄົນໃດຄົນໜຶ່ງ ບໍ່ສາມາດຖືກປະຕິເສດໂອກາດເທົ່າທຽມກັນ ຍ້ອນເຂົາເຈົ້າຫຼືຄອບຄົວຂອງເຂົາເຈົ້າ ມາຈາກປະເທດອື່ນ, ຍ້ອນເຂົາເຈົ້າມີຊື່ຫຼືສຳນຽງພາສາທີ່ ພົວພັນກັບກຸ່ມຊາດກຳເນີດຊາດນຶ່ງ, ຍ້ອນເຂົາເຈົ້າເຂົ້າຮ່ວມກັບ ການປະຕິບັດຮີດຄອງບາງຢ່າງ ທີ່ພົວພັນກັບກຸ່ມຊາດກຳເນີດອື່ນ, ຫຼືຍ້ອນເຂົາເຈົ້າໄດ້ແຕ່ງງານ ຫຼືພົວພັນກັບຄົນສັນຊາດອື່ນ.

ພະແນກສິດທິພົລເຮືອນແຫ່ງກະຊວງຍຸຕິທັມ ມີຄວາມເປັນຫ່ວງວ່າ ການແບ່ງແຍກຊັ້ນວັນນະຍ້ອນຊາດກຳເນີດ, ຢູ່ໃນສະຫະຣັດອາດບໍ່ຖືກລາຍງານ ຍ້ອນວ່າ ຜູ້ຖືກເຄາະຮ້າຍຈາກການແບ່ງແຍກຊັ້ນວັນນະນັ້ນ ບໍ່ຈັກຮູ້ສິດທິທາງກົດໝາຍຂອງຕົນ, ຫຼືອາດຢ້ານກົວໃນການເຮັດຄຳຮ້ອງທຸກຕໍ່ຣັຖບານ. ເພື່ອແກ້ໄຂບັນຫານີ້, ພະແນກສິດທິພົລເຮືອນໄດ້ຈັດຕັ້ງ ກຸ່ມເຮັດວຽກເຣື່ອງຊາດກຳເນີດ ເພື່ອຊ່ວຍເຫຼືອປະຊາຊົນແລະຄົນເຂົ້າເມືອງ ໃຫ້ເຂົ້າໃຈແລະໃຊ້ສິດທາງກົດໝາຍຂອງເຂົາເຈົ້າຢ່າງດີຂຶ້ນ. ຖ້າທ່ານຄິດວ່າທ່ານ ຫຼືຄົນອື່ນທີ່ທ່ານຮູ້ຈັກ ຖືກແບ່ງແຍກຊັ້ນວັນນະຍ້ອນຊາດກຳເນີດ ແລະຕ້ອງການຮຽນຮູ້ເພີ້ມເຕີມ ກ່ຽວກັບການຊົມໃຊ້ສິດທາງກົດໝາຍຂອງທ່ານ, ທ່ານຄວນອ່ານປຶ້ມນ້ອຍເຫຼັ້ມນີ້.

ປຶ້ມນ້ອຍເຫຼັ້ມນີ້ອະທິບາຍກົດໝາຍ ການແບ່ງແຍກຊັ້ນວັນນະຍ້ອນຊາດກຳເນີດ ແລະໃຫ້ຕົວຢ່າງບາງຂໍ້. ທ່ານອາດຫາຂໍ້ມູນເພີ້ມເຕີມກ່ຽວກັບພະແນກສິດທິພົລເຮືອນ ແລະພາກສ່ວນຕ່າງໆໄດ້ ຢູ່ທີ່ **http://www.usdoj.gov/crt.** ທ່ານສາມາດຕິດຕໍ່ກັບພະແນກ ເພື່ອລາຍງານຄຳຮ້ອງທຸກກ່ຽວກັບການແບ່ງແຍກຊັ້ນວັນນະ ຕາມທີ່ອະທິບາຍຢູ່ຂ້າງລຸ່ມນີ້.

# ການຮູ້ສິດທິທາງກົດໝາຍຂອງທ່ານ

ພະແນກສິດທິພົລເຮືອນແຫ່ງກະຊວງຍຸຕິທັມ ໄດ້ບັງຄັບໃຊ້ກົດໝາຍລັຖບານກາງ ທີ່ຫ້າມການແບ່ງແຍກຊົນວັນນະໃນ:

ການສຶກສາ

ການເຮັດວຽກ

ການພັກອາສັຍເຮືອນ

ການກູ້ຢືມເງິນ

ການຮັບໃຊ້ບໍຣິການປະຊາຊົນ

ໜ່ວຍບັງຄັບໃຊ້ກົດໝາຍ/ການຜິດພາດຂອງຕຳຫລວດ

ການລົງຄະແນນສຽງ

ນອກຈາກນັ້ນແລ້ວ, ພະແນກນີ້ຍັງໄດ້ບັງຄັບໃຊ້ກົດໝາຍ ທີ່ຫ້າມການແບ່ງແຍກຊົນວັນນະອີງຕາມອາການພິການ, ປົກປ້ອງສິດທິຂອງບຸກຄົນທີ່ເຂົ້າຄຸມຂັງຢູ່ໃນສະຖານທີ່ຕ່າງໆຂອງຣັດຫຼືທ້ອງຖິ່ນບາງແຫ່ງ, ແລະດຳເນີນຄະດີຟ້ອງຮ້ອງການຜິດກົດໝາຍອາຍາ ຊຶ່ງເກີດຂື້ນຍ້ອນເລື່ອງເຊື້ອຊາດ, ຜິວພັນ, ຫຼືຊາດກຳເນີດຂອງຜູ້ຮັບເຄາະຮ້າຍ.

ໃນບາງກໍລະນີ, ພະແນກນີ້ອາດເຂົ້າຫຍຸ້ງກ່ຽວກໍຕໍ່ເມື່ອມີ "ແບບແຜນຫຼືການປະຕິບັດ" ທີ່ເປັນການແບ່ງແຍກຊົນວັນນະ. "ແບບແຜນຫຼືການປະຕິບັດ" ໂດຍທົ່ວໄປໝາຍເຖິງວ່າ ມີເຫດການແບ່ງແຍກຊົນວັນນະຫຼາຍກວ່າໜຶ່ງຄັ້ງ, ທັງມີນະໂຍບາຍຫຼືການກະທຳທີ່ຊ້ຳໆກັນ ທີ່ເປັນການແບ່ງແຍກຊົນວັນນະນຳ.

# ການຝາຝືນອາຊຍາກັມ ສິດທິພົລເຮືອນ

* *ຊາຍໜຸ່ມຄົນນຶ່ງທີ່ສືບເຊື້ອສາຍ ຈາກອາຊີໃຕ້ໄດ້ຖືກທຳຮ້າຍຮ່າງກາຍ ເມື່ອລາວອອກຈາກງານດົນຕຣີ ຢູ່ທີ່ໄນຄລັບແຫ່ງນຶ່ງ. ຄົນຮ້າຍຊຶ່ງເປັນ ສະມາຊິກກຸ່ມອັນທະພານຜົມສັ້ນໄດ້ຮ້ອງດ່າເຊື້ອຊາດລາວ ໃນຂນະທີ່ ທຸບຕີຜູ້ເຄາະຮ້າຍດ້ວຍກຳປັ້ນແລະທໍ່ນ້ຳ ຢູ່ບ່ອນຈອດລົດຂອງໄນຄລັບ.*

* *ຢູ່ທີ່ປະຊຸມຂອງ* ***Ku Klux Klan***, *ສະມາຊິກຄົນໜຶ່ງໄດ້ບອກກັບພັກພວກຄົນອື່ນໆຂອງຕົນວ່າ ຄົນແມກຊິກັນກັບພວກໂພຣໂຕຣິກັນຄວນ "ກັບຄືນໄປປະເທດຂອງເຂົາ". ພວກເຂົາເຜົາໄມ້ກາງເຂນຢູ່ເດີ່ນໜ້າບ້ານຂອງ ຜົວເມັຍໜຸ່ມຄົນຮິສແປນິກຄູ່ນຶ່ງ ເພື່ອເຮັດໃຫ້ເຂົາເຈົ້າຢ້ານກົວ ແລະບັງຄັບ ໃຫ້ເຂົາເຈົ້າໜີຈາກຄຸ້ມບ້ານນັ້ນ. ກ່ອນເຜົາໄມ້ກາງເຂນ, ຈຳເລີຍໄດ້ຊັກປືນ ອອກມາ ແລະເອົາປືນອີກກະບອກນຶ່ງໃຫ້ໝູ່ຂອງລາວ ເພື່ອວ່າຖ້າຜູ້ເຄາະ ຮ້າຍພະຍາຍາມຕໍ່ສູ້.*

* *ບໍລິສັດອະເມຣິກັນແຫ່ງນຶ່ງ ໄປຫາຈ້າງຄົນງານໃນເມືອງນ້ອຍແຫ່ງນຶ່ງ ໃນປະເທດແມກຊີໂກ, ສັນຍາເຂົາເຈົ້າວ່າຈະເອົາງານໃຫ້ເຂົາເຈົ້າ ພ້ອມ ທັງຈະຈ່າຍຄ່າແຮງງານສູງໃຫ້. ແລ້ວບໍລິສັດດັ່ງກ່າວໄດ້ລັກລອບເອົາຄົນ ແມກຊິກັນເຂົ້າສະຫະຣັດໃນຖັງເປົ່າຂອງຣົດບັນທຸກຂອງແຫຼວ. ເມື່ອເຂົາ ເຈົ້າເຂົ້າມາຮອດສະຫະຣັດແລ້ວ, ຄົນງານເຫຼົ່ານັ້ນກໍໄດ້ຖືກຂົ່ມຂູ່ວ່າ ຖ້າເຂົາ ເຈົ້າພະຍາຍາມໜີຈາກບໍຣິສັດ, ເຂົາເຈົ້າຈະຖືກຂ້າຕາຍ.*

ກົດໝາຍອາຊຍາກັມຂອງພະແນກສິດທິພົລເຮືອນ ດຳເນີນຄະດີຟ້ອງຮ້ອງ ຕໍ່ສູ້ຄົນທີ່ຖືກກ່າວຫາວ່າ ໃຊ້ກຳລັງຫຼືຄວາມຮຸນເຂົ້າຂັດຂວາງສິດທິຂອງຄົນ ຊຶ່ງຣັຖບານກາງປ້ອງກັນ ຍ້ອນວ່າຊາດກຳເນີດຂອງເຂົາເຈົ້າ. ສິດທິເຫຼົ່ານີ້ ມີຣວມທັງເລື່ອງການພັກອາສັຍເຮືອນ, ການເຮັດວຽກ, ການສຶກສາ, ຫຼືການໃຊ້ສະຖາບັນສາທາລະນະ. ທ່ານຈະສາມາດຕິດຕໍ່ກັບພະແນກ ອາຊຍາກັມໄດ້ ຕາມເລກໂທ (202) 514-3204 ຫຼືຂຽນໄປຍັງ: **Criminal Section, P.O. Box 66018, Washington, D.C. 20035-6018.**

# ສິດທິພວກພິການ

** ສະຖານພະຍາບານ HMO ທີ່ຮັບຄົນເຈັບເມດິເຄດ ໄດ້ບອກຜູ້ຍິງອະເມຣິກັນແມກຊິກັນ ທີ່ສມອງພິການໃຫ້ກັບມານີ້ໃໝ່ ເພື່ອມາເອົານັດໝາຍເວລາເຂົ້າພົບທ່ານໝໍ ໃນຂນະທີ່ໃຫ້ການບໍຣິການແກ່ລູກຄ້າຄົນອື່ນທັນທີ.*

ເຣື່ອງເຊັ່ນຕົວຢ່າງນີ້ ອາດເປັນການຝ່າຝືນກົດໝາຍຂອງຣັຖບານກາງ ທີ່ຫ້າມການແບ່ງແຍກຊັ້ນວັນນະຍ້ອນການພິການ ຕລອດທັງກົດໝາຍທີ່ຫ້າມການແບ່ງແຍກຊັ້ນວັນນະຍ້ອນຊາດກຳເນີດນຳ. ຖ້າທ່ານເຊື່ອວ່າທ່ານຖືກແບ່ງແຍກຊັ້ນວັນນະຍ້ອນຄວາມພິການ, ທ່ານສາມາດຕິດຕໍ່ກັບພະແນກສິດທິຜູ້ພິການໄດ້ ຕາມເລກໂທ (800) 514-0301 (ສາຍປາກ)ຫຼື 800 514-0383 (TTY). ນອກນີ້ທ່ານຍັງສາມາດຂຽນໄປຍັງ: Disability Rights Section, P.O. Box 66738, Washington, D.C. 20035-6738.

## ການສຶກສາ

** ເດັກຜູ້ນຶ່ງມີບັນຫາດ້ານປາກພາສາອັງກິດ, ແຕ່ຂອງລາວບໍ່ໄດ້ໃຫ້ຄວາມຊ່ວຍເຫຼືອທີ່ຈຳເປັນ ເພື່ອຊ່ວຍລາວຮຽນພາສາອັງກິດ ແລະວິຊາອື່ນໆ.*

** ໂຮງຮຽນນຶ່ງມີນັກຮຽນສ່ວນຫຼາຍເປັນຄົນເຮຕີ ບໍ່ໄດ້ຈັດໃຫ້ມີວິຊາຮຽນສເພາະນັກຮຽນເກັ່ງ. ໂຮງຮຽນອື່ນໃນເຂດນີ້ ທີ່ບໍ່ມີນັກຮຽນເຮຕີຫຼາຍປານໃດນັ້ນ ໄດ້ຈັດໃຫ້ມີວິຊາຮຽນສເພາະນັກຮຽນເກັ່ງ ແລະນອກນັ້ນກໍຍັງຈັດໃຫ້ນັກຮຽນຜູ້ທີ່ສາມາດຮຽນໄດ້ສູງກວ່າຫຼັກສູດປະຈຳຊັ້ນ ໄດ້ຮຽນພິເສດນຳ.*

ຕົວຢ່າງເຫຼົ່ານີ້ອາດເປັນການຝ່າຝືນກົດໝາຍຂອງຣັຖບານກາງ ຊຶ່ງຫ້າມການແບ່ງແຍກຊັ້ນວັນນະຍ້ອນໃນການສຶກສາ ຍ້ອນວ່າຊາດກຳເນີດຂອງບຸກຄົນ. ພະແນກວ່າດ້ວຍໂອກາດການສຶກສາ ຂອງກະຊວງບັງຄັບໃຊ້ກົດໝາຍນີ້ໃນໂຮງຮຽນປະຖົມແລະມັທຍົມ ພ້ອມກັບວິທຍາລັຍແລະມະຫາວິທຍາລັຍສາທາຣະນະ. ວຽກງານຂອງພະແນກສຶກສານີ້ ແມ່ນເບິ່ງແຍງນຳເຣື່ອງການແບ່ງແຍກຊັ້ນວັນນະໃນທຸກກໍຣະນີການສຶກສາ, ຮວມທັງການຈັດສົ່ງນັກຮຽນໄປເຂົ້າໂຮງຮຽນແລະເຂົ້າຫ້ອງຮຽນ, ການຂົນສົ່ງນັກຮຽນ, ການຊອກຈ້າງແລະຈັດສົ່ງພະນັກງານຄູ ແລະເຈົ້າໜ້າທີ່ໂຮງຮຽນໄປປະຈຳບ່ອນໃດບ່ອນນຶ່ງ, ຈັດການແຈກຢາຍອຸປະກອນການສຶກສາຕ່າງໆ ຕລອດທັງການໃຫ້ໂຄງການສຶກສາຊຶ່ງຊ່ວຍນັກຮຽນທີ່ປາກພາສາອັງກິດບໍ່ຄ່ອງໃຫ້ຮຽນພາສາອັງກິດໄດ້ດີນຳ.

ເພື່ອຍື່ນຄຳຮ້ອງທຸກຫຼືຫາຂໍ້ມູນເພີ້ມເຕີມມາໄດ້, ໃຫ້ຕິດຕໍ່ກັບ ໝວດສຶກສາ ຕາມເລກໂທ (202) 514-4092 ຫຼືຂຽນໄປຍັງ: **Educational Opportunities Section, P.O. Box 65958, Washington, D.C. 20035-5958.**

## ການເຮັດວຽກ

* *ຫົວໜ້າຄົນງານບໍຣິສັດຂົນສົ່ງມັກເວົ້າດູຖູກເຊື້ອຊາດໃສ່ຄົນງານ ຍ້ອນຄອບຄົວລາວມາຈາກປະເທດອີຣານ. ອາທິດແລ້ວນີ້, ຫົວໜ້າດັງກ່າວຕິດປ້າຍປອມໃສ່ກະດານ ບອກທຸກຄົນວ່າຢ່າໄວ້ໃຈຄົນງານຜູ້ດັງກ່າວ ເພາະລາວເປັນຜູ້ກໍ່ການຮ້າຍ.*

* *ຜູ້ຍິງຜູ້ນຶ່ງຊຶ່ງອົພຍົບມາຈາກປະເທດຣັດເຊັຍສມັກໜ້າທີ່ຜູ້ຈັດບັນຊີ. ນາຍຈ້າງບໍ່ຍອມຮັບເອົາລາວ ເພາະລາວປາກພາສາໂດຍມີສຳນຽງ ເຖິງແມ່ນວ່າ ລາວມີຄວາມສາມາດດຳເນີນວຽກງານໄດ້ ຕາມໜ້າທີ່ກຳນົດຂອງງານນັ້ນກໍຕາມ.*

* *ບໍຣິສັດປຸງແຕ່ງອາຫານບັ່ງວ່າ ໃຫ້ຜູ້ສມັກທີ່ມີໜ້າຕາຫຼືສຳນຽງທີ່ສແດງວ່າອາດເປັນຄົນຕ່າງດ້າວ ໃຫ້ສະແດງໃບອະນຸຍາດໃຫ້ເຮັດວຽກ ກ່ອນທີ່ຈະອະນຸຍາດໃຫ້ເຂົ້າຂຽນປະກອບໃບສມັກໄດ້ ແຕ່ຄົນຂາວທີ່ເກີດໃນປະເທດນີ້ບໍ່ໄດ້ບັງໃຫ້ສເນີເອກສານອັນໃດ ກ່ອນປະກອບບັດໃບສມັກເຮັດວຽກ. ອີກຢ່າງ, ເອກສານຂອງລູກຈ້າງຕ່າງດ້າວ ມັກຖືກກວດຂັ້ນຢ່າງຖີ່ຖ້ວນກ່ວາ ແລະຖືກປະຕິເສດຫຼາຍກວ່າເອກສານແບບດຽວກັນ ທີ່ຄົນງານຂາວພື້ນເມືອງປະກອບຂຶ້ນ.*

ຕົວຢ່າງເຣື່ອງເຫຼົ່ານີ້ອາດເປັນການຝ່າຝືນກົດໝາຍຂອງຣັຖບານກາງ ຊຶ່ງ ຫ້າມການແບ່ງແຍກຊັ້ນວັນນະຍ້ອນຕໍ່ລູກຈ້າງ ຍ້ອນຊາດກຳເນີດຂອງເຂົາ. ແນວນີ້ໝາຍຄວາມວ່າ ນາຍຈ້າງຈະບໍ່ສາມາດລົງວິນັຍ, ລົບກວນ, ໄລ່ອອກ ວຽກ, ບໍ່ຮັບເອົາຄົນໃດຄົນນຶ່ງ ຫຼືເລື່ອນຊັ້ນໃຫ້ຄົນໃດຄົນນຶ່ງ ຍ້ອນຊາດກຳເນີດຂອງເຂົາເຈົ້າ.

ຖ້າທ່ານເຊື່ອວ່ານາຍຈ້າງ, ອົງການຈັດຕັ້ງແຮງງານ ຫຼືອົງການຫາງານ ແບ່ງແຍກຊຸມວັນນະຕໍ່ທ່ານ ຍ້ອນຊາດກຳເນີດຍ້ອນວ່າຊາດກຳເນີດທ່ານ, ໃຫ້ຕິດຕໍ່ກັບ:

ຄນະກັມມາທິການ ວ່າດ້ວຍໂອກາດເຮັດວຽກເທົ່າທຽມກັນ
(800) 669-4000
(ນາຍຈ້າງທີ່ມີລູກຈ້າງ 15 ຄົນຂຶ້ນໄປ)

ສຳນັກງານທະນາຍຄວາມພິເສດ
**(800) 255-7688**
**P.O. Box 27728**
**Washington, D.C. 20038-7728**
(ນາຍຈ້າງທີ່ມີລູກຈ້າງ 4 ຫາ 14 ຄົນຂຶ້ນໄປ)

ພະແນກຄະດີວຽກງານ
**(202) 514-3831**
**P.O. Box 65968**
**Washington, DC 20035-5968**
(ນາຍຈ້າງຣັຖບານຣັດຫຼືທ້ອງຖິ່ນທີ່ມີແບບການດຳເນີນ ຫຼືການປະຕິບັດອັນເປັນການແບ່ງແຍກຊຸມວັນນະທີ່ຜິດກົດໝາຍ)

ນອກຈາກນີ້ນາຍຈ້າງກໍອາດຝ່າຝືນກົດໝາຍຂອງຣັຖບານກາງໄດ້ ໂດຍບັງວ່າ ໃຫ້ຜູ້ສມັກງານເອົາໜັງສືອະນຸຍາດເຮັດວຽກອັນໃດອັນນຶ່ງໃຫ້ເບິ່ງ ເຊັ່ນບັດຂຽວ, ຫຼືບໍ່ຮັບເອົາເອກສານດັ່ງກ່າວ ພຽງແຕ່ວ່າຜູ້ສມັກມີຊາດກຳເນີດ ມາຈາກບາງປະເທດເທົ່ານັ້ນ. ເພື່ອເອົາຂໍ້ມູນເພີ່ມເຕີມ ຫຼືຍື່ນຄຳຟ້ອງຮ້ອງ, ໃຫ້ຕິດຕໍ່ກັບສຳນັກງານ ທະນາຍຄວາມພິເສດຂອງພະແນກຕາມທີ່ຢູ່ຂ້າງເທິງນີ້ ຫຼືຕາມເລກໂທຟຣີນັ້ນ.

## ການພັກອາສັຍເຮືອນ

*ໃນເວລາທີ່ຄົນພື້ນເມືອງຮາວາຍ ກຳລັງຊອກຫາຫ້ອງແຖວພັກຢູ່ນັ້ນ, ຕົວແທນຜູ້ໃຫ້ເຊົ່າໄດ້ບອກເຂົາເຈົ້າວ່າ ບໍ່ມີຫ້ອງແຖວໃຫ້ເຊົ່າແລ້ວ. ເຖິງແມ່ນວ່າ ມີຫ້ອງແຖວໄວ້ໃຫ້ເຊົ່າຄົນຜິວຂາວເຂົ້າເບິ່ງແລະເຊົ່າກໍຕາມ.*

*ຜູ້ຂາຍເຮືອນພາຄອບຄົວລາຕິໂນໄປເບິ່ງເຮືອນ ສເພາະແຕ່ໃນເຂດລາຕິໂນເທົ່ານັ້ນ ແລະບໍ່ຍອມພາຄອບຄົວນັ້ນໄປເບິ່ງເຮືອນໃນເຂດຜິວຂາວ.*

ເຣື່ອງຕົວຢ່າງເຫຼົ່ານີ້ຕົວຢ່າງເຣື່ອງເຫຼົ່ານີ້ ອາດເປັນການຝ່າຝືນກົດບັງຄັບການພັກອາສັຍເຮືອນເທົ່າທຽມກັນ ຂອງຣັຖບານກາງ. ກົດໝາຍນັ້ນຫ້າມ ການແບ່ງແຍກຊົນວັນນະກ່ຽວກັບການພັກອາສັຍເຮືອນ ຍ້ອນຊາດກຳເນີດ, ເຊື້ອຊາດ, ເພດ, ສາສນາ, ອາການພິການ, ຫຼືຖານະຄອບຄົວ (ມີລູກທີ່ມີອາ ຍຸຕ່ຳກວ່າ 18 ປີ). ທ່ານຈະສາມາດລາຍງານການແບ່ງແຍກຊົນວັນນະ ໃຫ້ກົມວ່າດ້ວຍການພັກອາສັຍເຮືອນ ແລະການພັທນາຕົວເມືອງ (HUD) ຕາມເລກໂທ (800) 669-9777. ຖ້າທ່ານເຊື່ອວ່າ ມີການກະທຳດັ່ງກ່າວເປັນປະຈຳ ຫຼືມີການປະຕິບັດການແຍກຊົນວັນນະ, ໃຫ້ຕິດຕໍ່ກັບ ພະແນກບັງຄັບການພັກພາອາສັຍເຮືອນ ແລະສິດພົລເຮືອນໄດ້ ຕາມເລກໂທ (202) 514-4713.

## ການກູ້ຢືມ

* *ຜູ້ຍິງລາຕິນາຜູ້ນຶ່ງຖືກຊັກຄ່າດອກເບັ້ຍ ແລະຄ່າທຳນຽມສູງກວ່າລູກຄ້າຜູ້ຊາຍຂາວຜູ້ມີປະຫວັດການເງິນຢ່າງດຽວ ແລະຂໍຢືມເງິນແບບດຽວກັນ.*

ເຣື່ອງແບບຕົວຢ່າງເຫຼົ່ານີ້ ອາດເປັນການຝ່າຝືນກົດໝາຍຂອງຣັຖບານກາງ ຊຶ່ງຫ້າມການແບ່ງແຍກຊົນວັນນະໃນການກູ້ຢືມຍ້ອນຊາດກຳເນີດ, ເຊື້ອຊາດ, ເພດ, ສາສນາ, ອາການພິການ, ຫຼືຖານະການແຕ່ງງານ ຫຼືຍ້ອນວ່າລາຍໄດ້ແນວ ໃດແນວໃດໆຂອງບຸກຄົນນັ້ນ ຊຶ່ງໄດ້ມາຈາກການຊ່ວຍເຫຼືອສາທາຣະນະຫຼື ບໍ. ຖ້າທ່ານຖ້າທ່ານເຊື່ອວ່າ ທ່ານເຄີຍຖືກປະຕິເສດບໍ່ໃຫ້ໄດ້ຮັບເງິນກູ້ ຍ້ອນຊາດກຳເນີດຫຼືຍ້ອນສາເຫດອື່ນ ທີ່ມີການປ້ອງກັນ, ທ່ານຈະສາມາດຂໍໃຫ້ຜູ້ໃຫ້ຢືມ ອະທິບາຍເປັນລາຍລັກອັກສອນສາເຫດຊຶ່ງເຂົາເຈົ້າປະຕິ ເສດຄວາມຮ້ອງຂໍຂອງທ່ານ.

ຖ້າເງິນຢືມນັ້ນຫາກແມ່ນສຳຫຼັບການຊື້ເຮືອນ, ເພື່ອການດັດແປງເຮືອນ, ຫຼືເຣື່ອງອື່ນໆກ່ຽວກັບການພັກອາສັຍເຮືອນ, ທ່ານກໍສາມາດຍື່ນຄຳຮ້ອງທຸກໄປຍັງກົມເຄຫະສະຖານແລະການພັທນາຕົວເມືອງ ຕາມເລກໂທ (800) 669-9777. ຖ້າການກູ້ຢືມແມ່ນເພື່ອຈຸປະສົງແນວອື່ນນອກເໜືອຈາກເຮືອນຊານ (ເຊັ່ນການຢືມໄປຊື້ຣົດ), ທ່ານກໍອາດຍື່ນຄຳຮ້ອງທຸກໄປຍັງກົມເຄຫະສະຖານແລະພະແນກສິດພົລເຮືອນ ຫຼືອົງການຮັກສາກົດຣະບຽບເຣື່ອງກູ້ຢືມໄດ້. ຖ້າປະສົບການຂອງທ່ານຫາກເປັນການໄດ້ຮັບເຄາະມາເປັນປະຈຳ ຫຼືຍ້ອນການປະຕິບັດການແຍກຊົນວັນນະ, ທ່ານກໍອາດສາມາດ

ໂທຫາ ພະແນກການພັກພາອາສັຍເຮືອນແລະສິດທິພົລເຮືອນໄດ້ ເລກໂທ (202) 514-4713 ເພື່ອເອົາຂໍ້ມູນເພີ້ມເຕີມກ່ຽວກັບສິດທິຂອງທ່ານ ຫຼືກ່ຽວກັບການຍື່ນຄຳຟ້ອງຮ້ອງ.

## ການຮັບໃຊ້ບໍຣິການປະຊາຊົນ

** ຢູ່ໃນຮ້ານອາຫານແຫ່ງນຶ່ງ. ພວກອະເມຣິກັນເອເຊັຍໄດ້ໄປນັ່ງລໍຖ້າການບໍຣິການ ເປັນເວລາຊົ່ວໂມງກວ່າ ໃນເມື່ອລູກຄ້າຄົນຂາວແລະຄົນລາທິໂນ ຮັບການບໍຣິການໂດຍທັນທີ.*

** ຄົນອະເມຣິກັນເຊື້ອສາຍເຣຕິທີ່ໄປໂຮງແຮມ ໄດ້ຖືກບອກວ່າລາວຕ້ອງຈ່າຍເງິນສົດແທນທີ່ຈະໃຊ້ບັດເຄຣດິດ, ຖືກໃຫ້ຈ່າຍຄ່າຫ້ອງສູງກວ່າລູກຄ້າຄົນອື່ນ, ແລະບໍ່ໄດ້ຮັບການບໍຣິການຢ່າງດຽວກັນກັບຄົນອື່ນໆ, ເຊັ່ນຜ້າເຊັດຕົວແລະສະບູກໍ່ບໍ່ຄືກັນ.*

ເຣື່ອງເຊັ່ນຕົວຢ່າງເຫຼົ່ານີ້ ອາດເປັນການຝ່າຝືນກົດໝາຍຂອງຣັຖບານກາງ ທີ່ຫ້າມການແບ່ງແຍກຊົນວັນນະຊາດກຳເນີດ, ເຊື້ອຊາດ, ຫຼືສາສນາ ໃນສະຖານທີ່ຮັບໃຊ້ບໍຣິການປະຊາຊົນ. ບ່ອນຮັບໃຊ້ບໍຣິການປະຊາຊົນ ຮວມມີທັງ ໂຮງແຮມ, ຮ້ານອາຫານ, ແລະສະຖານທີ່ບັນເທີງ. ຖ້າທ່ານເຊື່ອວ່າທ່ານໄດ້ຖືກປະຕິເສດການເຂົ້າຫາ ຫຼືການຊົມໃຊ້ການຮັບໃຊ້ບໍຣິການປະຊາຊົນ ບ່ອນທີ່ມີແບບແຜນຫຼືການປະຕິບັດຂອງການແບ່ງແຍກຊົນວັນນະ, ໃຫ້ຕິດຕໍ່ກັບພະແນກການພັກພາອາສັຍເຮືອນ ແລະບັງຄັບໃຊ້ສິດພົລເຮືອນໄດ້ ເລກໂທ (202) 514-4713. ນອກນັ້ນທ່ານຍັງສາມາດຂຽນໄປຫາ: **Housing and Civil Enforcement Section, P.O. Box 65998, Washington, D.C. 20035-5998.**

## ການປະພຶດຢ່າງບໍ່ເໝາະສົມຂອງຕຳຫລວດ

** ເຈົ້າໜ້າທີ່ຕຳຫລວດມັກສັ່ງໃຫ້ຣົດທີ່ຂັບໂດຍພວກລາທິໂນຈອດຢູ່ສເມີ ຍ້ອນການຣະເມີດກົດຣະບຽບຈະຣາຈອນບາງຂໍ້, ແຕ່ວ່າໜ້ອຍສຸດທີ່ຈະສັ່ງໃຫ້ຜູ້ຂັບຄົນຂາວຈອດຣົດ ຍ້ອນການຣະເມີດກົດຣະບຽບຂໍ້ດຽວກັນ.*

** ເຈົ້າໜ້າທີ່ຕຳຫລວດຄົນນຶ່ງໃຈຮ້າຍ ໃນຂະນະທີ່ສອບຖາມຊາຍເຊື້ອຊາດວຽດນາມຄົນນຶ່ງຢູ່ໃນຖະໜົນ ເມື່ອຊາຍຄົນດັ່ງກ່າວບໍ່ສາມາດຕອບຄຳຖາມຂອງລາວ ຍ້ອນວ່າລາວປາກພາສາອັງກິດບໍ່ເປັນ. ເຈົ້າໜ້າທີ່ກໍເລີຍຈັບກຸມຊາຍຄົນນັ້ນໃນເຫດຜົນທີ່ວ່າປະພຶດຜິດຣະບຽບ.*

ເຣື່ອງເຊັ່ນຕົວຢ່າງເຫຼົ່ານີ້ ອາດເປັນການຝ່າຝືນກົດໝາຍຄວາມສເມີພາບຂອງຣັດຖະທັມມະນູນແຫ່ງສະຫະຣັດ. ນອກຈາກນັ້ນແລ້ວ, ມັນຍັງອາດເປັນ ການຝ່າຝືນກົດບັນຍັດວ່າ ດ້ວຍການຄວບຄຸມອາຊະຍາກັມແລະມາຕຣາວ່າດ້ວຍ ຖະໜົນປອດພັຍຂອງປີ **1968** ນຳອີກ. ກົດໝາຍນັ້ນຫ້າມການແບ່ງແຍກຊັ້ນວັນນະຊາດກຳເນີດ, ເຊື້ອຊາດ, ຫຼືເພດຈາກກົມຕຳຫລວດທີ່ໄດ້ທຶນຈາກຣັຖບານກາງ ໂດຍຜ່ານທາງກະຊວງຍຸຕິທັມ. ນອກຈາກນັ້ນ, ມັນຍັງອາດເປັນການ ຝ່າຝືນກົດໝາຍມາຕຣາ **VI** ຂອງກົດໝາຍສິດທິພົລເຮືອນຂອງປີ **1964** ນຳອີກ, ຊຶ່ງຫ້າມການແບ່ງແຍກຊັ້ນວັນນະຈາກຫ້ອງການບັງຄັບກົດໝາຍ ຊຶ່ງໄດ້ຮັບທຶນຊ່ວຍເຫຼືອໃດນຶ່ງຂອງຣັຖບານກາງ, ຣວມທັງການຣັບຊັບ ສິນນຳ.

ຄຳຣ້ອງທຸກເຣື່ອງການແບ່ງແຍກຊັ້ນວັນນະຂອງບຸກຄົນ ສາມາດຖືກຍື່ນຫາ ພະແນກປະສານງານແລະທົບທວນ **Coordination and Review Section** ໄດ້ທີ່ **P.O. Box 66560, Washington, D.C. 20035-6560**, ຫຼືຕິດຕໍ່ຫາພະແນກປະສານງານແລະທົບທວນ ຕາມ ເລກໂທ **1-888-848-5306**.

ຄຳຣ້ອງທຸກເຣື່ອງການແບ່ງແຍກຊັ້ນວັນນະຂອງບຸກຄົນ ຍັງສາມາດຖືກຍື່ນ ກັບສຳນັກງານໂຄງການຍຸຕິທັມເພື່ອສິດທິພົລເຮືອນ **Office of Justice Programs, U.S. Department of Justice, Washington, D.C. 20531**, ຫຼືຕິດຕໍ່ຫາພະແນກປະສານງານໂຄງການຍຸຕິທັມ ແລະທົບທວນ ຕາມ ເລກໂທ **(202) 307-0690**.

ພະແນກດຳເນີນຄະດີພິເສດ ໄດ້ສືບສວນແລະດຳເນີນຄະດີຄຳຣ້ອງທຸກວ່າ ກົມຕຳຫລວດມີແບບແຜນ ຫຼືການປະຕິບັດອັນເປັນການແບ່ງແຍກຊັ້ນວັນນະ ອີງຕາມຊາດກຳເນີດ. ເພື່ອຍື່ນຄຳຣ້ອງທຸກ, ໃຫ້ຕິດຕໍ່ກັບພະແນກດຳເນີນ ຄະດີພິເສດ ຕາມເລກໂທ **(202) 514-6255** ຫຼືຂຽນຫາ: **Special Litigation Section, P.O. Box 66400, Washington, D.C. 20035-6400.**

## ສິດທິພົລເຮືອນຂອງປຜູ້ຖືກຄຸມຂັງ
## ຫຼືກຳລັງໄດ້ຮັບການປິ່ນປົວຢູ່

* *ຄຸກແຫ່ງໃດແຫ່ງນຶ່ງຈະບໍ່ຍອມແປ ການພິຈາຣະນາເຣື່ອງການລົງວິນັຍແກ່ຜູ້ຖືກຄຸມຂັງທີ່ປາກພາສາອັງກິດບໍ່ເປັນ.*

* *ໂຮງໝໍໂຣກຈິດຂອງຣັດຈະບໍ່ມີຊ່ອງທາງໃຫ້ການປິ່ນປົວ ກັບຄົນທີ່ປາກພາສາອັງກິດບໍ່ເປັນ.*

ເຣື່ອງເຊັ່ນໃນຕົວຢ່າງເຫຼົ່ານີ້ ອາດເປັນການຝ່າຝືນກົດໝາຍຄວາມສເມີພາບຂອງຣັດຖະທັມມະນູນແຫ່ງສະຫະຣັດ. ພະແນກດຳເນີນຄະດີພິເສດຮັບບັງຄັບໃຊ້ສິດທິຣັດຖະທັມມະນູນຂອງຄົນທີ່ຖືກຄຸມຂັງໃນສະຖານທີ່ຕ່າງໆຂອງຣັດຫຼືຣັຖບານທ້ອງຖິ່ນ ເຊັ່ນຄ້າຍຄຸມຂັງ, ຄຸກ, ຄ້າຍດັດສ້າງຄວາມປະພຶດຂອງເຍົາວະຊົນ, ໂຮງໝໍໂຣກຈິດ, ສະຖາບັນສຳຫຼັບຄົນພິການດ້ານການເຕີບໂຕຫຼືຄົນປັນຍາອ່ອນ, ສະຖານທີ່ເບິ່ງແຍງຜູ້ເຖົ້າ. ຖ້າທ່ານເປັນຄົນອາສັຍຢູ່ບ່ອນດັ່ງກ່າວ ແລະທ່ານເຊື່ອວ່າ ມີການກະທຳອັນເປັນຮູບແບບ ຫຼືມີການປະຕິບັດການທີ່ແບ່ງແຍກຊົນວັນນະ, ອີງຕາມຊາດກຳເນີດ, ໃຫ້ຕິດຕໍ່ກັບພະແນກດຳເນີນຄະດີພິເສດ ຕາມເລກໂທ **(202) 514-6255.** ທ່ານຍັງສາມາດຂຽນໄປຫາ: **Special Litigation Section, P.O. Box 66400, Washington, D.C. 20035-6400** ເຊັ່ນກັນ.

## ໂຄງການທີ່ໄດ້ຮັບຄວາມຊ່ວຍເຫຼືອຈາກຣັຖບານກາງ

* *ອົງການບໍຣິການສັງຄົມທ້ອງຖິ່ນ ບໍ່ຍອມໃຫ້ຂໍ້ມູນຫຼືການຝຶກຝົນອາຊີບເປັນພາສາເກົາຫຼີ ເຖິງແມ່ນວ່າປະຊາຊົນໃນເຂດທ້ອງຖິ່ນ ນຶ່ງສ່ວນສີ່ຈະປາກໄດ້ແຕ່ພາສາເກົາຫຼີເທົ່ານັ້ນກໍຕາມ.*

* *ໂຮງໝໍແຫ່ງນຶ່ງໃກ້ຊາຍແດນເທັກຊັສແລະແມກຊິໂກ ໄດ້ໃຫ້ເຈົ້າໜ້າທີ່ຮັກສາຄວາມປອດພັຍ ນຸ່ງເຄື່ອງແບບທີ່ຄ້າຍຄືກັນກັບເຄື່ອງແບບຂອງ **INS** ເພື່ອເຮັດໃຫ້ພວກລາທິໂນຢ້ານ ແລະບໍ່ປາກເຂົ້າໃຊ້ຫ້ອງສຸກເສີນ. ຄົນເຈັບລາທິໂນຖືກບອກໃຫ້ນຳນາຍພາສາຂອງຕົນເອງມາ ກ່ອນເຂົາເຈົ້າຈະໄດ້ເຂົ້າຫາທ່ານໝໍ.*

ເຣື່ອງເຊັ່ນຕົວປ່າງເຫຼົ່ານີ້ ອາດເປັນຜິດກົດໝາຍຂອງຣັຖບານກາງ ຊຶ່ງຫ້າມການແບ່ງແຍກຊົນວັນນະຍ້ອນຊາດກຳເນີດ, ເຊື້ອຊາດ, ຫຼືຜິວພັນ ໂດຍພາກສ່ວນທີ່ໄດ້ຮັບເງິນທຶນຊ່ວຍເຫຼືອຂອງຣັຖບານກາງ. ຖ້າທ່ານເຊື່ອວ່າ ທ່ານເຄີຍຖືກແບ່ງແຍກຊົນວັນນະ ໂດຍຣັດຫຼືອົງການຣັຖບານທ້ອງຖິ່ນ ຫຼືອົງການທີ່ໄດ້ຮັບເງິນທຶນຈາກຣັຖບານກາງ, ທ່ານອາດຍື່ນຄຳຮ້ອງທຸກໄດ້ກັບພະແນກປະສານງານແລະທົບທວນ ຕາມເລກໂທ (888)-848-5306. ທ່ານຍັງສາມາດຂຽນໄປຫາ: **Coordination and Review Section, P.O. Box 66560, Washington, D.C. 20035-6560** ເຊັ່ນກັນ. ພະແນກປະສານງານແລະທົບທວນ ຈະສົ່ງຄຳຮ້ອງທຸກໄປຕໍ່ທີ່ອົງການຣັຖບານກາງທີ່ໃຫ້ເງິນທຶນ ແລະທີ່ມີໜ້າທີ່ຮັບຜິດຊອບຂັ້ນຕົ້ນຕໍ່ການບັງຄັບການຫ້າມການແບ່ງແຍກຊົນວັນນະ ທີ່ກ່ຽວກັບຜູ້ຮັບຄວາມຊ່ວຍເຫຼືອຈາກເຂົາເຈົ້າ.

## ການລົງຄະແນນສຽງ

* *ເຖິງແມ່ນຈະມີການຮ້ອງຂໍຈາກຜູ້ລົງຄະແນນສຽງ ໃນມວນຊົນຄົນປາກພາສາສະແປນິສແຫ່ງນຶ່ງ ຈຳນວນຫຼວງຫຼາຍກໍຕາມ, ເຈົ້າໜ້າທີ່ກຳກັບການລົງຄະແນນສຽງກໍບໍ່ຍອມໃຫ້ ອຸປະກອນການເລືອກຕັ້ງຊຶ່ງຮວມມີຟອມຈົດຊື່ລົງທະບຽນ ແລະຕົວປ່າງບັດລົງຄະແນນສຽງເປັນພາສາສະແປນິສ, ຫຼືອະນຸຍາດໃຫ້ຜູ້ປາກພາສາສະແປນິສ ນຳເອົານາຍພາສາເຂົ້າໄປໃນຫ້ອງລົງລົງຄະແນນສຽງໄດ້.*

* *ເຈົ້າໜ້າທີ່ກຳກັບການລົງຄະແນນສຽງບົ່ງໃຫ້ ຜູ້ລົງຄະແນນສຽງຜິວດຳຊຶ່ງປາກເປັນສຳນຽງຕ່າງດ້າວ ແລະມີນາມສະກຸນທີ່ແປກໆ ໃຫ້ຍື່ນຫຼັກຖານພິສູດສັນຊາດອະເມຣິກັນ, ແຕ່ບໍ່ໄດ້ບັງຄັບໃຫ້ຄົນຜິວຂາວພິສູດສັນຊາດ.*

ການປະພຶດຂອງເຈົ້າໜ້າທີ່ກຳກັບການເລືອກຕັ້ງ ອາດເປັນຝ່າຝືນກົດໝາຍຣັຖບານກາງ ຊຶ່ງຫ້າມການແບ່ງແຍກຊົນວັນນະ ຕໍ່ການລົງຄະແນນສຽງ. ກົດບັນຍັດສິດທິການລົງຄະແນນສຽງ ບໍ່ໄດ້ຫ້າມການແບ່ງແຍກຊົນວັນນະ ຍ້ອນຊາດກຳເນີດໂດຍສເພາະ. ປ່າງໃດກໍດີ, ຂໍ້ກຳນົດຂອງກົດບັນຍັດນີ້ກໍເຮັດໃຫ້ການຈຳກັດຫຼືປະຕິເສດສິດ ລົງຄະແນນສຽງຂອງປະຊາຊົນຄົນໃດຄົນນຶ່ງຜິດກົດໝາຍ ບໍ່ພຽງແຕ່ເຊື້ອຊາດຜິວພັນເທົ່ານັ້ນ, ແຕ່ຍັງແມ່ນຍ້ອນການເປັນສະມາຊິກຂອງຊົນກຸ່ມນ້ອຍ ທີ່ປາກພາສາອື່ນອີກດ້ວຍ. ນອກຈາກນີ້ແລ້ວ, ກົດບັນຍັດນີ້ຍັງກຳນົດໃຫ້ເຂດສິດອຳນາດ, ອຸປະກອນການເລືອກຕັ້ງແລະຄວາມຊ່ວຍເຫຼືອເປັນພາສາອື່ນໆ ຊຶ່ງນອກຈາກພາສາອັງກິດນຳອີກ.

ນອກຈາກນີ້ແລ້ວ, ໝວດ 208 ຂອງກົດບັນຍັດນີ້ຍັງກຳນົດໃຫ້ສິດທິການລົງຄະແນນສຽງ, ບັງອະນຸຍາດໃຫ້ຜູ້ລົງຄະແນນສຽງ, ຜູ້ຕ້ອງການຄວາມຊ່ວຍເຫຼືອຍ້ອນຕາບອດ, ພິການຫຼືຍ້ອນເຂົາເຈົ້າບໍ່ສາມາດອ່ານຫຼືຂຽນໜັງສືບໍ່ໄດ້, ໃຫ້ນຳເອົາຄົນໃດຄົນນຶ່ງມາຊ່ວຍ (ນອກຈາກນາຍຈ້າງຫຼືຜູ້ຕາງໜ້າສະຫະ ພັນແຮງງານ). ນີ້ໝາຍຄວາມວ່າ ຜູ້ລົງຄະແນນສຽງທີ່ຕ້ອງການຄວາມຊ່ວຍເຫຼືອ ໃນການອ່ານບັດລົງຄະແນນສຽງ ທີ່ເປັນພາສາອັງກິດສາມາດນຳເອົາ ໝູ່ເພື່ອນຫຼືສະມາຊິກຄອບຄົວ ມາຊ່ວຍແປພາສາໃຫ້. ໃນບາງບ່ອນ, ເຈົ້າ ໜ້າທີ່ກຳກັບການເລືອກຕັ້ງຕ້ອງໃຫ້ຂໍ້ມູນຕ່າງໆເຊັ່ນ ໜັງສືລົງທະບຽນ, ບັດລົງຄະແນນສຽງເປັນບາງພາສາ ນອກຈາກພາສາອັງກິດແລ້ວ. ສິ່ງດັ່ງກ່າວອາດມີຮວມທັງນາຍພາສາມາຊ່ວຍຜູ້ລົງຄະແນນສຽງ.

ຖ້າທ່ານເຊື່ອວ່າທ່ານຖືກແບ່ງແຍກຊົນວັນນະໃນການລົງຄະແນນສຽງຫຼືຖືກປະຕິເສດຄວາມຊ່ວຍເຫຼືອໃນການລົງຄະແນນສຽງ, ທ່ານສາມາດຕິດຕໍ່ກັບພະແນກກຳກັບການລົງຄະແນນສຽງຂອງກົມໄດ້ ທີ່ເລກໂທ **(800) 253-3931.** ທ່ານອາດຂຽນໄປຫາ **Voting Section, P.O. Box 66128, Washington, D.C. 20035-6128.**

**ໝາຍເຫດ**: ສຳຫຼັບຄົນທີ່ມີອາການພິການ, ເອກສານນີ້ຈະມີໃຫ້ເປັນແບບຕົວອັກສອນໃຫຍ່ໆ, ເທັບຄະແຊັດ, ແຜ່ນຄອມພິວເຕີ, ແລະຕົວອັກສອນສຳຫຼັບຄົນຕາບອດ.

ເວລາທ່ານໂທຫາຫ້ອງການມີຣາຍຊື່ຢູ່ໃນປື້ມນ້ອຍເຫຼັ້ມນີ້, ທ່ານຈະໄດ້ຍິນສຽງຕອບເປັນພາສາອັງກິດ. ຖ້າທ່ານຕ້ອງການນາຍພາສາ, ໃຫ້ບອກກັບຜູ້ຮັບສາຍວ່າ ທ່ານປາກພາສາໃດ. ຜູ້ຮັບສາຍຈະໃຫ້ທ່ານລໍຖ້າ ໃນຂນະດຽວກັນກັບທີ່ຊອກເອົານາຍພາສາ. ກະຣຸນາຢ່າວາງສາຍ.

ກະຣຸນາພິມແຈກຢາຍຕໍ່ໆກັນໄປ.

# Federal Protections Against National Origin Discrimination

## Laotian

**http://www.usdoj.gov/crt**